ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເລກທີ 999 /ອຊ

ອຸດົມໄຊ, ວັນທີ 10 ຕຸລາ 2022

# ຄຳສັ່ງ

## ວ່າດ້ວຍການເພີ່ມທະວີຈັດຕັ້ງປະຕິບັດ ຄຸ້ມຄອງພະນັກງານ, ລັດຖະກອນ ແລະ ກຳລັງປະກອບອາວຸດ ຢູ່ແຂວງອຸດົມໄຊ

ເຖິງ: ບັນດາທ່ານຫົວໜ້າພະແນກການ, ອົງການ, ສອງກອງບັນຊາການ ປກຊ-ປກສ, ເຈົ້າເມືອງ, ກົມກອງ, ລັດວິສາຫະກິດ, ທະນາຄານ, ສະຖາບັນການເງິນ, ໂຮງຮຽນ ແລະ ໂຮງໝໍ ພາຍໃນແຂວງອຸດົມໄຊ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 27/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ການຄົ້ນຄວ້າເຫັນດີເປັນເອກະພາບ ໃນກອງປະຊຸມອົງການປົກຄອງແຂວງເປີດກວ້າງ ຄັ້ງວັນທີ 27 ກໍລະກົດ 2022;
- ອີງຕາມ ໜັງສືສະເໜີຂອງພະແນກພາຍໃນ ສະບັບເລກທີ 699 /ພນຂ, ລົງວັນທີ 09 ກັນຍາ 2022.

ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ເປັນກຳລັງທີ່ສຳຄັນ ແລະ ຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດທຸກໜ້າທີ່ວຽກງານ, ເປັນຜູ້ບໍລິການຮັບໃຊ້ປະຊາຊົນ ຕາມດຳລັດວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນ, ເປັນແບບຢ່າງນຳໜ້າໃນການປະຕິບັດກົດໝາຍ, ລະບຽບການ ຊຶ່ງເວລາໃດ ພັກ, ລັດຖະບານ ກໍ່ໄດ້ເອົາໃຈໃສ່ ໃນການຄຸ້ມຄອງ ດ້ວຍການວາງແນວທາງ, ນະໂຍບາຍ, ລະບຽບການ ເປັນແຕ່ລະໄລຍະ ແລະ ເຫັນໄດ້ວ່າພະນັກງານ-ລັດຖະກອນ ທຸກຂົງເຂດ ແລະ ກຳລັງປະກອບອາວຸດ ກໍ່ມີການເຄື່ອນໄຫວ, ປະຕິບັດໜ້າທີ່ວຽກງານໄປຕາມແນວທາງນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຂອງລັດ, ຂອງກົມກອງ ດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດເປັນກ້າວໆມາ.

ແຕ່ເຖິງຢ່າງໃດກໍ່ຕາມ, ອີງໃສ່ສະພາບຕົວຈິງໃນປະຈຸບັນ ທີ່ມີການພົວພັນຮ່ວມມື, ປະສານງານກັບພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ໂດຍສະເພາະແມ່ນການສື່ສານທີ່ທັນສະໄໝ ບວກກັບສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄດ້ກະທົບຕໍ່ແນວຄິດ, ຊີວິດການເປັນຢູ່ ແລະ ການປະຕິບັດໜ້າທີ່ຂອງພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ຢ່າງຫຼີກລ່ຽງບໍ່ໄດ້ ຈຶ່ງເຮັດໃຫ້ພະນັກງານຈຳນວນໜຶ່ງມີແນວຄິດ, ການກະທຳທີ່ບໍ່ສອດຄ່ອງກັບກົດໝາຍ, ຂາດຈັນຍາບັນ ໃນການບໍລິການຮັບໃຊ້ປະຊາຊົນ ຊຶ່ງກໍ່ໃຫ້ເກີດປະກົດການຫຍໍ້ທໍ້ຫຼາຍບັນຫາໃນຖັນແຖວພະນັກງານ, ລັດຖະກອນ ທີ່ເລັ່ງທວງໃຫ້ພວກເຮົາຕ້ອງຮີບຮ້ອນປັບປຸງ, ປ່ຽນແປງ ແລະ ແກ້ໄຂໂດຍໄວ.



สแกนด้วย CamScanner

ສະນັ້ນ, ເພື່ອສະກັດກັ້ນ ແລະ ແກ້ໄຂບັນຫາປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຖັນແຖວພະນັກງານ, ລັດຖະກອນ ຢູ່ໃນການຈັດຕັ້ງລັດທຸກຂັ້ນ, ລວມທັງ ກຳລັງປະກອບອາວຸດ, ລັດວິສາຫະກິດ ຢູ່ພາຍໃນແຂວງອຸດົມໄຊ ໃຫ້ຕົກໄປ, ທັງເປັນການຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານໃນໄລຍະໃໝ່ນັ້ນ

**ເຈົ້າແຂວງ ອອກຄຳສັ່ງ:**

1. ໃຫ້ພະນັກງານ, ລັດຖະກອນ, ກຳລັງປະກອບອາວຸດ, ພະນັກງານລັດວິສາຫະກິດ ຢູ່ໃນການຈັດຕັ້ງລັດທຸກຂັ້ນ ໃນທົ່ວແຂວງອຸດົມໄຊ ຕ້ອງເປັນເຈົ້າການ ໃນການປະຕິບັດກົດໝາຍ, ນິຕິກຳ, ລະບຽບການຕ່າງໆທີ່ກ່ຽວຂ້ອງກັບການ ຄຸ້ມຄອງ ພະນັກງານ, ລັດຖະກອນ, ກຳລັງປະກອບອາວຸດ, ພະນັກງານລັດວິສາຫະກິດ ທີ່ວາງອອກ ຢ່າງເຂັ້ມງວດ , ຊຶ່ງໃນນັ້ນ ຕ້ອງເອົາໃຈໃສ່:

1.1. ຈົ່ງຮັກພັກດີ, ຊື່ສັດບໍລິສຸດຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ, ຮັກບ້ານເກີດເມືອງນອນຂອງຕົນເອງ, ມີສະຕິເຄົາລົບ ແລະ ເປັນແບບຢ່າງໃນການປະຕິບັດລັດຖະທຳມະນູນ, ກົດໝາຍ, ລະບຽບການວາງອອກຢ່າງເຂັ້ມງວດ, ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນພະນັກງານ, ລັດຖະກອນ, ກຳລັງປະກອບອາວຸດທີ່ດີ ມີຄຸນທາດການເມືອງໜັກແໜ້ນ ແລະ ມີຄຸນສົມບັດສິນທຳປະຕິວັດທີ່ດີ;

1.2. ຕັ້ງໜ້າປະຕິບັດ ພາລະບົດບາດ, ໜ້າທີ່, ຄວາມຮັບຜິດຊອບ ຕາມການຈັດຕັ້ງມອບໝາຍໃຫ້ ໂດຍສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການວາງອອກ, ເປັນເຈົ້າການເຂົ້າຮ່ວມ ຂະບວນການເຄື່ອນໄຫວວຽກງານຕ່າງໆ ຢູ່ໃນອົງການຈັດຕັ້ງ ບ່ອນຕົນເອງສັງກັດ;

1.3. ເປັນແບບຢ່າງທີ່ດີ ໃນການປະຫຍັດມັດທະຍັດ ແລະ ເປັນເຈົ້າການເຂົ້າຮ່ວມ ຕ້ານການຟູມເຟືອຍ, ຕ້ານພະຍາດອາດຍາສິດ ແລະ ຕ້ານການສໍ້ລາດບັງຫຼວງ; ຮັກສາຈັນຍາບັນຂອງພະນັກງານ, ລັດຖະກອນ, ກຳລັງປະກອບອາວຸດ ກໍ່ຄືຮັກສາກຽດສັກສີຂອງຕົນ; ກ້າຕຳນິສິ່ງຂ່າວຕໍ່ການຈັດຕັ້ງ ແລະ ເພື່ອນຮ່ວມງານ ທີ່ ຕົນສັງກັດ ພ້ອມກັນນີ້ກໍ່ຕ້ອງຍອມຮັບການຕຳນິສິ່ງຂາວຈາກການຈັດຕັ້ງ, ເພື່ອນຮ່ວມງານ ດ້ວຍຄວາມຈິງໃຈ ເພື່ອພິຈາລະນາປັບປຸງ, ປ່ຽນແປງຕົນເອງ;

1.4. ມີການພິຈາລະນາບໍລິໂພກ, ນຳໃຊ້ຂໍ້ມູນຂ່າວສານ ຈາກສື່ອອນລາຍຕ່າງໆຢ່າງຖືກຕ້ອງ, ການນຳຂໍ້ມູນຕ່າງໆທາງລັດຖະການ, ຂໍ້ມູນສ່ວນຕົວຂອງຕົນເອງລົງສື່ອອນລາຍຕ່າງໆ ຕ້ອງໄດ້ພິຈາລະນາໃຫ້ຖືກຕ້ອງ, ສອດຄ່ອງກັບວັດທະນະທຳ ອັນດີງາມຂອງລາວເຮົາ;

2. ໃຫ້ພະນັກງານ, ລັດຖະກອນ, ກຳລັງປະກອບອາວຸດ, ພະນັກງານລັດວິສາຫະກິດ ຢູ່ໃນການຈັດຕັ້ງລັດທຸກຂັ້ນ ໃນທົ່ວແຂວງອຸດົມໄຊ ປະຕິບັດ ຂໍ້ຫ້າມຕ່າງໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ, ນິຕິກຳ, ລະບຽບການວ່າດ້ວຍຂໍ້ຫ້າມພະນັກງານ, ລັດຖະກອນ, ກຳລັງປະກອບອາວຸດ, ພະນັກງານລັດວິສາຫະກິດ ຢ່າງເຂັ້ມງວດ, ໃນນັ້ນ ຕ້ອງເປັນເຈົ້າການປະຕິບັດຂໍ້ຫ້າມຕົ້ນຕໍຈຳນວນໜຶ່ງ ດັ່ງນີ້:

2.1. ຫ້າມເມີນເສີຍຕໍ່ການມອບໝາຍວຽກງານ, ປະລະໜ້າທີ່ ຫຼື ຢຸດເຊົາວຽກງານຕາມລຳພັງໃຈ, ຂາດການ ຫຼື ໃຊ້ເວລາໃນໂມງລັດຖະການ ໄປເຄື່ອນໄຫວວຽກງານຄອບຄົວສ່ວນຕົວ ແລະ ງານອື່ນໆໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງ;

2.2. ຫ້າມໃສ່ຊຸດເຄື່ອງແບບຂອງກົມກອງ, ຂອງອົງການຈັດຕັ້ງມະຫາຊົນ ເຂົ້າຮ້ານບັນເທີງ, ຮ້ານກິນດື່ມເພື່ອສັງສັນຊຸມແຊວ (ຍົກເວັ້ນງານທາງການທີ່ການຈັດຕັ້ງຈັດຂຶ້ນ); ຫ້າມດື່ມເຫຼົ້າ, ດື່ມເບຍ ໃນວັນລັດຖະການ (ວັນຈັນ ຫາ ວັນສຸກ ) ນັບແຕ່ເວລາ 7 ໂມງ 30 ນາທີ ຫາ 16 ໂມງ 30 ນາທີ ຍົກເວັ້ນ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ລາພັກເປັນເຈົ້າພາບຈັດງານຕ່າງໆຂອງຄອບຄົວ, ຍາດຕິພີ່ນ້ອງ;

2.3. ຫ້າມສ້າງກຸ່ມກ້ອນ, ພັກພວກ ແລະ ມີພຶດຕິກຳສ້າງຄວາມປັ່ນປ່ວນ, ບິດເບືອນຄວາມຈິງ, ໂຄສະນາໃສ່ຮ້າຍປ້າຍສີ, ທັບຖົມໂຈມຕີ ເພື່ອແບ່ງແຍກຄວາມສາມັກຄີພາຍໃນການຈັດຕັ້ງ, ບຸກຄົນ, ສັງຄົມ, ຊົນເຜົ່າ ທຸກຮູບແບບ ແລະ ທຸກວິທີການ;

2.4. ຫ້າມມີທ່າທີກິລິຍາ ຫຼື ການປະພຶດທີ່ບໍ່ພໍໃຈ, ແກ້ແຄ້ນ, ປາບປາມ, ບັງຄັບ, ນາບຂູ່ ຕໍ່ຜູ້ຕຳນິຕິສິ່ງຂ່າວ ແລະ ຜູ້ສະເໜີລາຍງານຂໍ້ມູນດ້ານຫຍໍ້ທໍ້ ຫຼື ການກະທຳຜິດຂອງຕົນ ຕໍ່ການຈັດຕັ້ງ;



สแกนด้วย CamScanner

2.5. ຫ້າມຍັກຍອກ, ສໍ້ໂກງເອົາຊັບສິນຂອງລັດ, ຂອງລວມໝູ່, ໃຫ້ສິນບົນ, ຮັບສິນບົນ ຂອງພົນລະເມືອງ, ສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່, ສວຍໃຊ້ຊັບຂອງລັດ ຫຼື ລວມໝູ່, ໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ເກີນຂອບເຂດ, ກົດໜ່ວງຖ່ວງດຶງການແກ້ໄຂວຽກງານ ຊຶ່ງກໍ່ໃຫ້ເກີດຜົນເສຍຫາຍຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ;

2.6. ຫ້າມຄອບຄອງ ຫຼື ນໍາໃຊ້ສະຖານທີ່ຂອງລັດ, ລວມໝູ່ ໂດຍບໍ່ຖືກຕ້ອງ, ນໍາໃຊ້ເງິນ ຫຼື ຊັບຂອງລັດ, ລວມໝູ່ ເພື່ອສັງສັນຊຸມແຊວ, ເອົາເປັນຂອງຂວັນ ຫຼື ແບ່ງປັນໃຫ້ພະນັກງານ ຫຼື ບຸກຄົນອື່ນ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ບຸງບການກໍານົດ, ປຸກລະດົມການອຸປະຖໍາທຸກຮູບແບບ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ;

2.7. ຫ້າມເປັນນາຍໜ້າ, ເປັນທີ່ປຶກສາ, ສົມຮູ້ຮ່ວມຄິດ ຫຼື ເອື້ອອໍານວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ, ວິສາຫະກິດ, ເອກະຊົນ ໃນການເຄື່ອນໄຫວດ້ານທຸລະກິດ ທີ່ບໍ່ຖືກຕ້ອງຕາມກົດໝາຍຂອງລັດ, ປອມແປງເອກະສານ ຫຼື ນໍາໃຊ້ເອກະສານປອມ, ປອມແປງລາຍເຊັນ, ແລ່ນຄະດີ, ແລ່ນໂຄງການ, ແລ່ນຂໍໂກຕ້າຕ່າງໆ, ສ້າງເງື່ອນໄຂເອື້ອອໍານວຍຄວາມສະດວກໃຫ້ແກ່ບຸກຄົນອື່ນ ທີ່ພົວພັນເຖິງສິດການຕັດສິນໃຈ... ທີ່ພົວພັນເຖິງສິດການຕົກລົງຂອງຕົນ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ;

2.8. ຫ້າມພົວພັນ, ຄ້າຂາຍເຖື່ອນ ຫຼື ສິ່ງຕ້ອງຫ້າມທຸກປະເພດ ເປັນຕົ້ນ: ລົດເຖື່ອນ, ຫວຍເຖື່ອນ, ສິນຄ້າຕ້ອງຫ້າມ, ຫຼິ້ນການພະນັນທຸກປະເພດ ແລະ ທຸກຮູບແບບ;

2.9. ຫ້າມປ່ອຍເງິນ, ກູ້ຢືມເງິນນອກລະບົບ ໂດຍບໍ່ໄດ້ຮັບການອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ, ປ່ອຍເງິນກູ້ໂດຍຄິດໄລ່ດອກເບ້ຍເກີນອັດຕາດອກເບ້ຍທີ່ທະນາຄານໄດ້ກໍານົດໄວ້;

2.10. ຫ້າມພົວພັນ, ຄ້າຂາຍ, ໃຫ້ຜູ້ອື່ນ, ມີໄວ້ໃນຄອບຄອງ ຫຼື ນໍາໃຊ້ ອາວຸດເສິກ, ອາວຸດລ່າເນື້ອ (ປືນແກັບ, ປືນແວ້ງ, ປືນລົມ ແລະ ອື່ນໆ), ອຸປະກອນລ່າສັດນໍ້າ, ສັດປ່າ ທີ່ກົດໝາຍຫວງຫ້າມ ເຂົ້າໃນການເຄື່ອນໄຫວ ໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ;

2.11. ຫ້າມນໍາໃຊ້ສື່ອອນລາຍຕ່າງໆເປັນເຄື່ອງມືລົງຂໍ້ມູນຂ່າວສານ, ຮູບພາບ, ຄິບວິດີໂອຕ່າງໆທີ່ບໍ່ຖືກຕ້ອງ, ສອດຄ່ອງ ຊຶ່ງເປັນການທັບຖົມໂຈມຕີ, ວິພາກວິຈານ ທີ່ສ້າງຄວາມເຊື່ອມເສຍ ໃຫ້ແກ່ການຈັດຕັ້ງ, ບຸກຄົນອື່ນ;

2.12. ຫ້າມປະພຶດ ທີ່ເປັນການລະເມີດຕໍ່ຮີດຄອງປະເພນີ ແລະ ວັດທະນະທໍາອັນດີງາມຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ; ເຄື່ອນໄຫວເປັນໝໍຜີ, ໝໍດູ, ໝໍເປົ່າ, ໝໍພອນ ແລະ ສວຍໃຊ້ສາສະໜາ ເຄື່ອນໄຫວໃນທາງທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກໍານົດໄວ້;

2.13. ຫ້າມພົວພັນ, ເສບ ຫຼື ຫຍຸ້ງກ່ຽວກັບ ສິ່ງເສບຕິດທຸກປະເພດ, ຖ້າຫາກມີຂໍ້ມູນ, ຫຼັກຖານຄົບຖ້ວນ ຄ້າຂາຍ, ຂົນສົ່ງ, ຜະລິດ, ເສບ ຫຼື ມີສ່ວນພົວພັນກັບສິ່ງເສບຕິດ ແມ່ນໃຫ້ເອົາອອກຈາກການຈັດຕັ້ງ ລັດທັນທີ, ພ້ອມທັງດໍາເນີນຄະດີ ຕາມກົດໝາຍ ແລະ ລະບຽບການຕ່າງໆວາງອອກຢ່າງເຂັ້ມງວດ;

3. ໃຫ້ຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ, ລັດວິສາຫະກິດ, ກົມກອງ, ທະນາຄານ-ສະຖາບັນການເງິນຂອງລັດ, ສອງກອງບັນຊາການ ປກຊ-ປກສ ຂັ້ນແຂວງ ແລະ ຫົວໜ້າບັນດາຫ້ອງການ, ກົມກອງຂັ້ນເມືອງ ເປັນເຈົ້າການ ດັ່ງນີ້:

3.1. ເຂັ້ມງວດໃນການຄຸ້ມຄອງພະນັກງານ, ລັດຖະກອນ, ກໍາລັງປະກອບອາວຸດ ທາງດ້ານຊີວະປະຫວັດ, ການເຄື່ອນໄຫວປະຕິບັດວຽກງານທີ່ໄດ້ຮັບການມອບໝາຍ, ການເຄື່ອນໄຫວໃນສັງຄົມ ແລະ ການອະນຸຍາດລາພັກຕ່າງໆ ຕາມກົດໝາຍ ແລະ ລະບຽບການຕ່າງໆວາງອອກ;

3.2. ຖືເອົາເນື້ອໃນຂອງຄໍາສັ່ງສະບັບນີ້ ເປັນສ່ວນໜຶ່ງໃນການດໍາເນີນຊີວິດການເມືອງ, ຕີລາຄາ, ຕໍານິສົ່ງຂ່າວ, ສໍາຫຼວດກວດກາພະນັກງານ, ລັດຖະກອນ, ກໍາລັງປະກອບອາວຸດ ທີ່ນອນໃນຄວາມຮັບຜິດຊອບຂອງຕົນປະຈໍາເດືອນ, ປະຈໍາໄຕມາດ ແລະ ຕິດຕາມ, ກວດກາພ້ອມທັງແກ້ໄຂຕໍ່ຜູ້ລະເມີດ ຕາມຂັ້ນຕອນ ຂອງກົດໝາຍ ແລະ ລະບຽບການຕ່າງໆວາງອອກຢ່າງເຂັ້ມງວດ;

3.3. ເຜີຍແຜ່ ຄໍາສັ່ງສະບັບນີ້ ໃຫ້ພະນັກງານ, ລັດຖະກອນ, ກໍາລັງປະກອບອາວຸດ ຢູ່ໃນຄວາມຮັບຜິດຊອບຂອງຕົນ ຮັບຮູ້, ເຂົ້າໃຈ ຢ່າງເລິກເຊິ່ງ ແລະ ທົ່ວເຖິງ;



สแกนด้วย CamScanner

4. ມອບໃຫ້ ພະແນກພາຍໃນແຂວງ, ຫ້ອງການພາຍໃນເມືອງ ເປັນໃຈກາງໃນການຜັນຂະຫຍາຍຈັດຕັ້ງປະຕິບັດ ຊີ້ນຳທາງດ້ານວິຊາການ ແລະ ສ່ອງແສງລາຍງານຜົນຂອງການຈັດຕັ້ງປະຕິບັດໃຫ້ການນຳເປັນປົກກະຕິ;

5. ມອບໃຫ້ ຄະນະກວດກາລັດແຂວງ, ເມືອງ ເປັນເຈົ້າການໃນການຕິດຕາມ, ກວດກາ ໃນການຜັນຂະຫຍາຍ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ພ້ອມທັງຄົ້ນຄວ້າມາດຕະການແກ້ໄຂຕໍ່ບຸກຄົນ ແລະ ການຈັດຕັ້ງທີ່ລະເມີດໃຫ້ຂັ້ນເທິງພິຈາລະນາ;

6. ຄຳສັ່ງສະບັບນີ້ ມີຜົນບັງຄັບໃຊ້ສຳລັບ ການຈັດຕັ້ງລັດ, ກອງກຳລັງປະກອບອາວຸດ ປກຊ- ປກສ, ການຈັດຕັ້ງລັດສູນກາງປະຈຳຢູ່ແຂວງ, ກົມກອງ, ລັດວິສາຫະກິດ ທົ່ວແຂວງອຸດົມໄຊ ແຕ່ບໍ່ກວມເອົາກອງພົນທະຫານຮາບທີ ສາມ ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ບຸນຄົງ ຫຼ້າຈຽມພອນ

• ບ່ອນນຳສົ່ງ:

| | | |
|---|---|---|
| 1. | ພະແນກ/ອົງການທຽບເທົ່າຂັ້ນແຂວງ ພາກສ່ວນລະ | 01 ສະບັບ; |
| 2. | ອົງການປົກຄອງເມືອງ ເມືອງລະ | 01 ສະບັບ; |
| 3. | ກອງບັນຊາການປ້ອງກັນຄວາມສະຫງົບແຂວງ | 01 ສະບັບ; |
| 4. | ກອງບັນຊາການທະຫານແຂວງ | 01 ສະບັບ; |
| 5. | ລັດວິສາຫະກິດ, ທະນາຄານ, ສະຖາບັນການເງິນພາກສ່ວນລະ | 01 ສະບັບ. |



สแกนด้วย CamScanner